**ບົດບັນທຶກການຮ່ວມມື**
**ລະຫວ່າງ**
**ກະຊວງ ສິ່ງແວດລ້ອມ ແຫ່ງ ປະເທດຍີ່ປຸ່ນ**
**ແລະ**
**ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບ ການຄຸ້ມຄອງສິ່ງແວດລ້ອມ**

ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ແຫ່ງ ສປປ ລາວ ແລະ ກະຊວງສິ່ງແວດລ້ອມ ແຫ່ງ ປະເທດຍີ່ປຸ່ນ, (ຕໍ່ໄປນີ້ຈະເອີ້ນວ່າ "ຝ່າຍ" ແລະ ລວມກັນເປັນ "ທັງສອງຝ່າຍ")

ມີຈຸດປະສົງຢາກເພີ່ມທະວີການພົວພັນມິດຕະພາບທີ່ເປັນມູນເຊື້ອລະຫວ່າງສອງຝ່າຍ;

ມີຄວາມສົນໃຈຮ່ວມກັນໃນການຊຸກຍູ້ການຮ່ວມມືເພື່ອການພັດທະນາແບບຍືນຍົງ;

ໂດຍຮັບຮູ້ເຖິງຄວາມສໍາຄັນຂອງການອະນຸລັກ ແລະ ປັບປຸງສິ່ງແວດລ້ອມສໍາລັບຄົນລຸ້ນປັດຈຸບັນ ແລະ ອະນາຄົດ.

ຮັບຮູ້ວ່າການປົກປັກຮັກສາສິ່ງແວດລ້ອມຢ່າງມີປະສິດທິຜົນຮຽກຮ້ອງໃຫ້ມີການຮ່ວມມືທົ່ວໂລກ,ການປະສານງານ ແລະ ຄວາມພະຍາຍາມ ແລະ ກິດຈະກໍາ ເຫຼົ່ານັ້ນ ເພື່ອປົກປັກຮັກສາ ສິ່ງແວດລ້ອມ ຄວນປະຕິບັດໃນລະດັບພາກພື້ນ, ລະດັບຊາດ ແລະ ທ້ອງຖິ່ນ; ແລະ

ອີງຕາມກົດໝາຍ ແລະ ລະບຽບການຂອງປະເທດ ຂອງທັງສອງຝ່າຍ,

ໂດຍໄດ້ມີການຕົກລົງຮ່ວມກັນຄື:

## ວັກທີ I
## ຈຸດປະສົງ

ຈຸດປະສົງຂອງບົດບັນທຶກການຮ່ວມມືສະບັບນີ້ (ຕໍ່ໄປນີ້ເອີ້ນວ່າ “MOC”) ແມ່ນເພື່ອເພີ່ມທະວີ, ອຳນວຍຄວາມສະດວກ ແລະ ພັດທະນາການຮ່ວມມືດ້ານສິ່ງແວດລ້ອມ, ຢືນຢັນຄືນໃໝ່ເຖິງຄວາມສຳຄັນຂອງການຈັດຕັ້ງປະຕິບັດສັນຍາປາຣີ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs).

## ວັກທີ II
## ຂອບເຂດການຮ່ວມມື

ການກຳນົດກິດຈະກຳການຮ່ວມມືຕ່າງໆແມ່ນອີງຕາມການເຫັນດີຂອງ ທັງສອງຝ່າຍ ພາຍໃຕ້ຂອບເຂດການຮ່ວມມື ກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ, ດັ່ງລຸ່ມນີ້:

**ການປ່ຽນແປງດິນຟ້າອາກາດ:**

1) ແຜນງານແຫ່ງຊາດວ່າດ້ວຍການປະກອບສ່ວນເຂົ້າໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC)
2) ການປະຕິບັດຄວາມໂປ່ງໃສ ໃນການຫຼຸດຜ່ອນການປ່ອຍອາຍກາກບອນຕ່ຳ (GHG)
3) ການຈັດຕັ້ງປະຕິບັດ ມາດຕາ 6 ຂອງສັນຍາປາຣີ ລວມທັງ ກົນໄກ JCM
4) ແຜນງານແຫ່ງຊາດ ວ່າດ້ວຍການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (NAP)
5) ການຮ່ວມມືກອງທຶນ (Loss and Damage)

**ມົນລະພິດ:**

1) ການຄຸ້ມຄອງມົນລະພິດທາງອາກາດ

**ຊີວະນາໆພັນ:**

1) ການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນປະຕິບັດງານດ້ານຊີວະນາໆພັນແຫ່ງຊາດ (NBSAP); ແລະ

ການຮ່ວມມືດ້ານອື່ນໆທີ່ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຕາມການຕົກລົງຮ່ວມກັນ.

ການຈັດຕັ້ງປະຕິບັດການຮ່ວມມືອື່ນໆທີ່ເຫັນດີທັງສອງຝ່າຍ.

## ວັກທີ III
## ການຈັດຕັ້ງປະຕິບັດ ແລະ ຮູບແບບການຮ່ວມມື

ທັງສອງຝ່າຍຈະຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືໂດຍຜ່ານຮູບການທີ່ເໝາະສົມ ພາຍໃຕ້ການປະກອບສ່ວນຂອງທັງສອງຝ່າຍ, ລວມມີ:

- ຈັດກອງປະຊຸມສໍາມະນາ
- ການແລກປ່ຽນຂໍ້ມູນຂ່າວສານ ແລະ ຄວາມຊໍານິຊໍານານ
- ການດໍາເນີນການ ການຝຶກອົບຮົມ ແລະ ການສ້າງຂີດຄວາມສາມາດ;

- ຊຸກຍູ້ໂຄງການຄົ້ນຄວ້າ ວິເຄາະ ແລະ ໂຄງການທົດລອງ; ແລະ

ຮູບແບບການຮ່ວມມືອື່ນໆລວມທັງ ກອງປະຊຸມສໍາມະນາ ແລະ ກອງປະຊຸມອື່ນໆ ແມ່ນຈະຕ້ອງເປັນໄປຕາມການຕົກລົງຮ່ວມກັນ.

ການຈັດຕັ້ງປະຕິບັດການຮ່ວມມືພາຍໃຕ້ MOC ສະບັບນີ້ແມ່ນໄດ້ຮັບການຜັນຂະຫຍາຍຢ່າງລະອຽດຕື່ມໂດຍອີງໃສ່ແຜນງານ ຫຼື plan of action (ຕໍ່ໄປນີ້ເອີ້ນວ່າ "PoA") ເຊິ່ງເປັນແຜນທີ່ສ້າງຂຶ້ນແຍກອອກມາ. ການດັດແກ້ໃດໆຂອງ PoA ຈະຕ້ອງຜ່ານການສະເໜີໂດຍຝ່າຍໃດໜຶ່ງ ແລະ ຕ້ອງໄດ້ຮັບການຢັ້ງຢືນຈາກຈຸດປະສານງານ ຂອງທັງສອງຝ່າຍ ເປັນລາຍລັກອັກສອນ.

## ວັກທີ IV
## ຈຸດປະສານງານ

ເພື່ອຮັບປະກັນການເຄື່ອນໄຫວຢ່າງມີປະສິດທິພາບພາຍໃຕ້ MOC ສະບັບນີ້, ທັງສອງຝ່າຍຈະແຕ່ງຕັ້ງ ຈຸດປະສານງານ ເຊິ່ງຈະເປັນຜູ້ຕາງໜ້າຂອງແຕ່ລະຝ່າຍໃນການປະສານງານກ່ຽວກັບທຸກບັນຫາພາຍໃຕ້ MOC ສະບັບນີ້. ສໍາລັບ ກະຊວງສິ່ງແວດລ້ອມ ແຫ່ງ ປະເທດຍີ່ປຸ່ນ, ຈຸດປະສານງານຈະແມ່ນ ຫົວໜ້າ ໜ່ວຍງານຮ່ວມມືສາກົນເພື່ອການຫັນປ່ຽນໄປສູ່ການຫຼຸດຜ່ອນການປ່ອຍອາຍກາກບອນ ແລະ ພື້ນຖານໂຄງລ່າງແບບຍືນຍົງ ພາຍໃຕ້ ສູນສິ່ງແວດລ້ອມໂລກ. ສໍາລັບ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ຈຸດປະສານງານຈະແມ່ນ ກົມແຜນການ ແລະ ການຮ່ວມມື.

## ວັກທີ V
## ການດັດແກ້

ບົດບັນທຶກການຮ່ວມມື ສະບັບນີ້ ອາດຖືກດັດແກ້ໄດ້ທຸກເວລາໂດຍ ຜ່ານການຍິນຍອມ ແລະ

ເຫັນດີເປັນລາຍລັກອັກສອນຂອງທັງສອງຝ່າຍ.
ການດັດແກ້ຕ່າງໆຈະມີການລິເລີ່ມແມ່ນອີງໃສ່ການຈັດຕັ້ງປະຕິບັດຕາມ ວັກທີ VII ແລະ ວັກດັ່ງກ່າວເປັນສ່ວນທີ່ສຳຄັນຂອງ MOC ສະບັບນີ້.

**ວັກທີ VI**

**ການແກ້ໄຂຄວາມແຕກຕ່າງ**

ໃນກໍລະນີທີ່ມີຄວາມແຕກຕ່າງໃດໆກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ MOC ສະບັບນີ້, ທັງສອງຝ່າຍ ຈະມີການແກ້ໄຂຮ່ວມກັນໂດຍຜ່ານການປຶກສາຫາລືກັນຢ່າງເປັນເອກະພາບ.

**ວັກທີ VII**

**ການເລີ່ມນຳໃຊ້, ໄລຍະເວລາ, ການຍຸຕິ ແລະ ອື່ນໆ**

ການຮ່ວມມືພາຍໃຕ້ MOC ສະບັບນີ້ແມ່ນຈະເລີ່ມນຳໃຊ້ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ສືບຕໍ່ເປັນໄລຍະເວລາຫ້າ (5) ປີ ແລະ ອາດຈະຂະຫຍາຍໄລຍະເວລາເພີ່ມ ຕາມການເຫັນດີຮ່ວມກັນຂອງທັງສອງຝ່າຍເປັນລາຍລັກອັກສອນ ຫຼື ສາມາດຍຸຕິການນຳໃຊ້ ໄດ້ຕະຫຼອດເວລາໂດຍຝ່າຍໃດໜຶ່ງ ດ້ວຍການແຈ້ງເປັນລາຍລັກອັກສອນ ຢ່າງໜ້ອຍຫົກ (6) ເດືອນ ກ່ອນມື້ທີ່ຕ້ອງການຈະຍຸຕິການຮ່ວມມື.

ການຍຸຕິການຮ່ວມມືດັ່ງກ່າວ ຈະບໍ່ສົ່ງຜົນໃຫ້ມີການຢຸດເຊົາໂຄງການ ຫຼື ກິດຈະກຳອື່ນໆທີ່ກຳລັງດຳເນີນຢູ່ ແລະ ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດຈົນກວ່າຈະສຳເລັດ, ເວັ້ນເສຍຈະມີການຕັດສິນໃຈເພີ່ມເຕີມຈາກທັງສອງຝ່າຍ.

ບັນທຶກການຮ່ວມມື MOC ສະບັບນີ້ ຈະບໍ່ມີຜົນກະທົບຕໍ່ສິດ ແລະ ພັນທະທາງດ້ານກົດໝາຍໃດໆພາຍໃຕ້ກົດໝາຍພາຍໃນ ແລະ ສາກົນ.

ລົງນາມທີ່....................................., ວັນທີ...................................2025 ຈຳກັນ, ໃນພາສາອັງກິດ, ລາວ ແລະ ຍີ່ປຸ່ນ.

ສໍາລັບ ກະຊວງສິ່ງແວດລ້ອມ ແຫ່ງ ຍີ່ປຸ່ນ

ເຄອິຈິໂຣ ອາຊາໂອະ

(Keiichiro Asao)

ລັດຖະມົນຕີ

ສໍາລັບ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ

ລິນຄໍາ ດວງສະຫວັນ

ລັດຖະມົນຕີ